ດຳລັດ ........................................................................ 4
ກົດໝາຍ ຄອບຄົວ ........................................................................ 5
ພາກທີ I ຫລັກການລວມ ........................................................................ 5
ມາດຕາ 1. ໜ້າທີ່ຂອງກົດໝາຍຄອບຄົວ ........................................................................ 5
ມາດຕາ 2. ຄວາມສະເໝີພາບ ລະຫວ່າງຍິງ ຊາຍໃນສາຍພົວພັນຄອບຄົວ ........................................................................ 5
ມາດຕາ 3. ເສລີພາບໃນການແຕ່ງດອງ. ........................................................................ 5
ມາດຕາ 4. ການເປັນຜົວໜຶ່ງເມັຽດຽວ. ........................................................................ 5
ມາດຕາ 5. ການປົກປັກຮັກສາຜົນປະໂຫຍດຂອງແມ່ ແລະ ເດັກ ........................................................................ 6
ພາກທີ II ການສູ່ຂໍ ແລະ ການແຕ່ງດອງ ........................................................................ 6
ໝວດທີ 1 ການສູ່ຂໍ ........................................................................ 6
ມາດຕາ 6. ການສູ່ຂໍ ........................................................................ 6
ມາດຕາ 7. ການທົດແທນຄວາມເສັຽຫາຍ ເນື່ອງມາຈາກ ການບໍ່ປະຕິບັດຕາມການສູ່ຂໍ ........................................................................ 6
ມາດຕາ 8. ການຮ່ວມປະເວນີກັນກ່ອນແຕ່ງດອງ ........................................................................ 6
ໝວດທີ 2 ການແຕ່ງດອງ ........................................................................ 6
ມາດຕາ 9. ເງື່ອນໄຂການເອົາກັນເປັນຜົວເມັຽ ........................................................................ 6
ມາດຕາ 10. ການບໍ່ອະນຸຍາດໃຫ້ແຕ່ງດອງ ........................................................................ 6
ໝວດທີ 3 ລະບຽບການແຕ່ງດອງ ........................................................................ 7
ມາດຕາ 11. ການພິຈາລະນາ ແລະ ການຈົດທະບຽນແຕ່ງດອງ ........................................................................ 7
ມາດຕາ 12. ພິທີແຕ່ງດອງ ........................................................................ 7
ໝວດທີ 4 ສາຍພົວພັນລະຫວ່າງຜົວເມັຽ ........................................................................ 7
ມາດຕາ 13. ສິດ ແລະ ພັນທະຂອງຜົວເມັຽ ........................................................................ 7
ມາດຕາ 14. ສິດໃນການເຄື່ອນໄຫວຂອງຜົວເມັຽ ........................................................................ 7
ມາດຕາ 15. ສິດໃນການເລືອກນາມສະກຸນ ........................................................................ 8
ໝວດທີ 5 ການສິ້ນສຸດການເປັນຜົວເມັຽກັນ ........................................................................ 8
ມາດຕາ 16. ສາຍເຫດຂອງການສິ້ນສຸດການເປັນຜົວເມັຽກັນ ........................................................................ 8
ມາດຕາ 17. ການແຕ່ງດອງເປັນໂມຄະ ........................................................................ 8
ມາດຕາ 18. ການລົບລ້າງການແຕ່ງດອງທີ່ເປັນໂມຄະ ........................................................................ 8
ມາດຕາ 19. ຜົນສະທ້ອນຂອງການແຕ່ງດອງທີ່ເປັນໂມຄະ ........................................................................ 8
ມາດຕາ 20 (ໃໝ່).ສາເຫດຂອງການຢ່າຮ້າງ ........................................................................ 8
ມາດຕາ 21. ການພິຈາລະນາຄະດີຢ່າຮ້າງ ........................................................................ 9
ມາດຕາ 22. ການບໍ່ອະນຸຍາດໃຫ້ຂໍຢ່າຮ້າງ ........................................................................ 9
ມາດຕາ 23. ການຮັກສາ ແລະ ລ້ຽງດູລູກ ........................................................................ 9
ມາດຕາ 24. ການຮ້ອງຂໍຄ່າລ້ຽງດູ ........................................................................ 10
ມາດຕາ 25. ການເອົາກັນຄືນເປັນຜົວເມັຽ ........................................................................ 10

ໝວດທີ 6 ຊັບສິນບັດຂອງຄູ່ຜົວເມັຽ ........................................................................................10
ມາດຕາ 26. ຊັບເດີມ ແລະ ສິນສົມສ້າງ ..............................................................................10
ມາດຕາ27.  ການນຳໃຊ້ສິນສົມສ້າງ.....................................................................................10
ມາດຕາ 28. ການແບ່ງປັນຊັບສິນບັດຂອງຄູ່ຜົວເມັຽ ..................................................................10
ພາກທີ III ສິດ ແລະ ພັນທະ ຂອງພໍ່ແມ່ ແລະ ລູກ ...................................................................11
ໝວດທີ 1 ການຮັບຮູ້ເດັກເປັນລູກ .....................................................................................11
ມາດຕາ 29. ການໄດ້ສິດ ແລະ ພັນທະຂອງພໍ່ ແມ່ ແລະ ລູກ ......................................................11
ມາດຕາ 30. ການຮັບຮູ້ການເປັນພໍ່.......................................................................................11
ມາດຕາ 31. ຊື່, ນາມສະກຸນ ແລະ ສັນຊາດຂອງເດັກ ...............................................................11
ມາດຕາ 32. ພັນທະຂອງພໍ່ແມ່ ໃນການສຶກສາອົບຮົມລູກ ...........................................................12
ມາດຕາ 33. ພັນທະຂອງພໍ່ແມ່ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ.................................12
ມາດຕາ 34. ຊັບສິນບັດຂອງພໍ່ແມ່ ແລະ ລູກ ..........................................................................13
ມາດຕາ 35. ພັນທະຂອງພໍ່ແມ່ໃນການເບິ່ງແຍງລ້ຽງດູລູກ............................................................13
ມາດຕາ 36. ພັນທະຂອງລູກໃນການລ້ຽງດູ, ການເບິ່ງແຍງ ແລະ ຊ່ວຍເຫລືອພໍ່ແມ່............................13
ໝວດທີ 2 ການເອົາເດັກມາເປັນລູກລ້ຽງ ...............................................................................13
ມາດຕາ 37. ການເອົາເດັກມາເປັນລູກລ້ຽງ.............................................................................13
ມາດຕາ 38. ເງື່ອນໄຂຂອງການເອົາເດັກມາເປັນລູກລ້ຽງ.............................................................14
ມາດຕາ 39. ລະບຽບກ່ຽວກັບການເອົາເດັກມາເປັນລູກລ້ຽງ ..........................................................14
ມາດຕາ 40. ການຮັກສາຄວາມລັບ ກ່ຽວກັບການເປັນລູກລ້ຽງ.......................................................14
ມາດຕາ 41. ຜົນຂອງການເປັນລູກລ້ຽງ..................................................................................14
ມາດຕາ 42. ການສິ້ນສຸດການເປັນລູກລ້ຽງ.............................................................................14
ໝວດທີ 3 ການແຕ່ງຕັ້ງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ......................15
ມາດຕາ 43. ຫນ້າທີ່ຂອງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ...................15
ມາດຕາ 44. ລະບຽບການແຕ່ງຕັ້ງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ 15
ມາດຕາ45. ສິດ ແລະ ພັນທະ ຂອງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດ
ທາງດ້ານການປະພຶດ ........................................................................................................15
ມາດຕາ 46. ການສິ້ນສຸດ ການເປັນຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດ
ທາງດ້ານການປະພຶດ ........................................................................................................16
ພາກທີ IV ການນຳໃຊ້ກົດຫມາຍຄອບຄົວລາວ ຕໍ່ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ
ແລະ ຕໍ່ພົນລະເມືອງລາວຢູ່ຕ່າງປະເທດ.................................................................................16
ຫມວດທີ 1 ການແຕ່ງດອງ ແລະ ການຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ,
ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ
ດ້ວຍກັນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ .............................................................16

ມາດຕາ 47. ການແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.............................................................16
ມາດຕາ 48. ການຢ່າຮ້າງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.............................................................17
ຫມວດທີ 2 ການແຕ່ງດອງ ແລະ ການຢ່າຮ້າງລະຫວ່າງ ພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ.....17
ມາດຕາ 49. ການແຕ່ງດອງລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ .........................17
ມາດຕາ 50. ການຢ່າຮ້າງ ລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ ...........................17
ຫມວດທີ 3 ການເອົາເດັກທີ່ເປັນພົນລະເມືອງລາວມາເປັນລູກລ້ຽງ .............................................17
ມາດຕາ 51. ການເອົາເດັກທີ່ເປັນພົນລະເມືອງລາວມາເປັນລູກລ້ຽງ .......................................17

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

ເລກທີ 97/ປທປທ
ລົງວັນທີ 24/12/1990

# ດຳລັດ

**ຂອງປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍຄອບຄົວ.

- ອີງຕາມ ມະຕິຂອງກອງປະຊຸມຜູ້ແທນປະຊາຊົນທົ່ວປະເທດ ຄັ້ງວັນທີ 2 ທັນວາ 1975 ວ່າດ້ວຍການແຕ່ງຕັ້ງປະທານປະເທດ.
- ອີງຕາມ ກົດໝາຍວ່າດ້ວຍ ສະພາປະຊາຊົນສູງສຸດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 04/ສປສ ລົງວັນທີ 19 ເມສາ 1988.
- ອີງຕາມ ມະຕິຕົກລົງຂອງກອງປະຊຸມ ຄັ້ງທີ 5 ສະໄໝສາມັນຂອງສະພາປະຊາຊົນສູງສຸດ ຊຸດທີ II ກ່ຽວກັບການຮັບຮອງເອົາກົດໝາຍຄອບຄົວ ສະບັບເລກທີ 07/90/ສປສ ລົງວັນທີ 18 ທັນວາ 1990.

**ປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກດຳລັດ :**

<u>ມາດຕາ 1</u>: ປະກາດໃຊ້ກົດໝາຍ ຄອບຄົວ.
<u>ມາດຕາ 2</u>: ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ໄດ້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 24 ທັນວາ 1990
ຜູ້ວ່າການແທນປະທານປະເທດ
ພູມີ ວົງວິຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ເອກະພາບ ສັງຄົມນິຍົມ

<u>ສະພາປະຊາຊົນສູງສຸດ</u> ເລກທີ 07/90/ສປສ

# ກົດໝາຍ ຄອບຄົວ

## ພາກທີ I ຫລັກການລວມ

### <u>ມາດຕາ 1</u>. ໜ້າທີ່ຂອງກົດໝາຍຄອບຄົວ

ກົດໝາຍຄອບຄົວມີໜ້າທີ່:

ປົກປັກຮັກສາ ແລະ ກໍ່ສ້າງຄອບຄົວໃຫ້ເປັນຈຸລັງອັນເຂັ້ມແຂງຂອງສັງຄົມລາວ;

ສ້າງສາຍພົວພັນຄອບຄົວ ດ້ວຍການແຕ່ງດອງ ໂດຍຄວາມສະໝັກໃຈ ແລະ ສະເໝີພາບ ລະຫວ່າງ ຍິງຊາຍ;

ສຶກສາອົບຮົມລູກໃຫ້ມີນໍ້າໃຈຮັກຄອບຄົວ, ຮັກຊາດ ແລະ ເຂົ້າຮ່ວມການປົກປັກຮັກສາ ແລະ ກໍ່ສ້າງປະເທດຊາດ;

ປົກປັກຮັກສາຜົນປະໂຫຍດຂອງແມ່ ແລະ ເດັກໃນຊີວິດຄອບຄົວ ແລະ ໃນເມື່ອຜົວເມັຽ ຢ່າຮ້າງກັນ;

ປົກປັກຮັກສາ ແລະ ເສີມຂະຫຍາຍຮີດຄອງປະເພນີອັນດີງາມ.

### <u>ມາດຕາ 2</u>. ຄວາມສະເໝີພາບ ລະຫວ່າງຍິງ ຊາຍໃນສາຍພົວພັນຄອບຄົວ

ຍິງ ແລະ ຊາຍ ມີສິດເທົ່າທຽມກັນໃນທຸກດ້ານ ກ່ຽວກັບສາຍພົວພັນຄອບຄົວ.

ສາຍພົວພັນຄອບຄົວເກີດຂຶ້ນໂດຍບໍ່ຂຶ້ນກັບຕົ້ນກໍາເນີດ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ເຊື້ອຊາດ, ເຜົ່າຊົນ, ລະດັບວັດທະນະທໍາ, ອາຊີບ, ສາດສະໜາ, ພູມລໍາເນົາ ແລະ ອື່ນໆ.

### <u>ມາດຕາ 3</u>. ເສລີພາບໃນການແຕ່ງດອງ.

ຍິງ ແລະ ຊາຍ ທີ່ເຖິງກະສຽນອາຍຸແຕ່ງດອງແລ້ວ ກໍມີສິດເອົາກັນເປັນຜົວເມັຽໄດ້ຕາມຄວາມສະໝັກໃຈ, ເສລີພາບ ແລະ ຄວາມຮັກມັກກັນ.

ຫ້າມບຸກຄົນໃດໜຶ່ງບັງຄັບ ຫລື ຂັດຂວາງການແຕ່ງດອງຂອງບຸກຄົນອື່ນ.

### <u>ມາດຕາ 4</u>. ການເປັນຜົວໜຶ່ງເມັຽດຽວ.

ການເອົາກັນເປັນຜົວເມັຽ ໃຫ້ປະຕິບັດຕາມລະບອບຜົວໜຶ່ງເມັຽດຽວ.

### ມາດຕາ 5. ການປົກປັກຮັກສາຜົນປະໂຫຍດຂອງແມ່ ແລະ ເດັກ.

ລັດ ແລະ ສັງຄົມ ປົກປັກຮັກສາຜົນປະໂຫຍດຂອງຜູ້ເປັນແມ່ ແລະ ເດັກໃນຊີວິດຄອບຄົວ ແລະ ໃນເມື່ອຜົວເມັຽບໍ່ສາມາດຈະຢູ່ນຳກັນໄດ້.

## ພາກທີ II ການສູ່ຂໍ ແລະ ການແຕ່ງດອງ

## **ໝວດທີ 1 ການສູ່ຂໍ**

### ມາດຕາ 6. ການສູ່ຂໍ

ເມື່ອຄູ່ບ່າວສາວ ຫາກມັກຮັກ ແລະ ຕົກລົງຈະເອົາກັນເປັນຜົວເມັຽແລ້ວ ຝ່າຍຊາຍກໍເອົາພໍ່ແມ່, ເຖົ້າແກ່ຂອງຕົນໄປສູ່ຂໍນຳພໍ່ແມ່, ເຖົ້າແກ່ຂອງຝ່າຍຍິງ ຕາມຮີດຄອງປະເພນີ ເພື່ອຕົກລົງກ່ຽວກັບພິທີແຕ່ງດອງ.

### ມາດຕາ 7. ການທົດແທນຄວາມເສັຽຫາຍ ເນື່ອງມາຈາກ ການບໍ່ປະຕິບັດຕາມການສູ່ຂໍ

ໃນກໍລະນີທີ່ມີຄວາມເສັຽຫາຍ ຕໍ່ກຽດສັກສີຂອງຝ່າຍຍິງ ຫລື ຝ່າຍຊາຍ ຫລື ມີການໃຊ້ຈ່າຍເຂົ້າໃນການກະກຽມແຕ່ງດອງຝ່າຍທີ່ບໍ່ປະຕິບັດຕາມການສູ່ຂໍ ກໍຈະໄດ້ຮັບຜິດຊອບໃຊ້ແທນຄ່າເສັຽຫາຍນັ້ນ.

### ມາດຕາ 8. ການຮ່ວມປະເວນີກັນກ່ອນແຕ່ງດອງ

ໃນເມື່ອຊູ້ສາວ ໄດ້ຮ່ວມປະເວນີກັນກ່ອນ ຖ້າຫາກຊາຍຊູ້ບໍ່ເອົາຍິງຊູ້ເປັນເມັຽແລ້ວ ຊາຍຊູ້ນັ້ນກໍຈະໄດ້ທຳຂວັນຍິງຊູ້ ຫລື ຄອບຄົວຂອງຍິງຊູ້ ຕາມຮີດຄອງປະເພນີ.

ຖ້າຫາກມີການຮ່ວມປະເວນີ ຈົນເຖິງຂັ້ນຖືພາມານ ນອກຈາກຈະໄດ້ເສັຽຄ່າທຳຂວັນແລ້ວ ຊາຍຊູ້ຍັງຈະຕ້ອງເສັຽຄ່າອອກລູກ, ຄ່າຢູ່ກຳ ແລະ ຄ່າໃຊ້ຈ່າຍອື່ນໆຕື່ມອີກ.

ຊາຍຊູ້ຍັງມີພັນທະລ້ຽງດູລູກ ທີ່ເກີດມານັ້ນ ຈົນກວ່າເດັກຈະຮອດກະສຽນອາຍຸ.

## **ໝວດທີ 2 ການແຕ່ງດອງ**

### ມາດຕາ 9. ເງື່ອນໄຂການເອົາກັນເປັນຜົວເມັຽ

ຜູ້ຊາຍ ແລະ ຜູ້ຍິງທີ່ມີອາຍຸ ສິບແປດປີຂຶ້ນໄປ ມີສິດແຕ່ງດອງໄດ້. ໃນກໍລະນີພິເສດ ແລະ ຈຳເປັນ ອາຍຸດັ່ງກ່າວ ອາດຈະຕ່ຳກວ່າ ສິບແປດປີກໍໄດ້ ແຕ່ບໍ່ໃຫ້ຫລຸດ ສິບຫ້າປີ. ການແຕ່ງດອງຕ້ອງມີການຕົກລົງ ແລະ ຄວາມສະໝັກໃຈເອົາກັນເປັນຜົວເມັຽຂອງທັງສອງຝ່າຍ ໂດຍບໍ່ມີການບັງຄັບຈາກຝ່າຍໃດຝ່າຍໜຶ່ງ ຫລື ບຸກຄົນໃດໜຶ່ງ.

### ມາດຕາ 10. ການບໍ່ອະນຸຍາດໃຫ້ແຕ່ງດອງ

ການແຕ່ງດອງ ຈະບໍ່ອະນຸຍາດໄດ້ ໃນກໍລະນີດັ່ງນີ້:

1. ບຸກຄົນທີ່ເປັນບ້າເສັຽຈິດ ຫລື ພວມເປັນພະຍາດ ທີ່ຈະເປັນອັນຕະລາຍຕໍ່ຊີວິດ ຫລື ສຸຂະພາບຂອງຜົວ ຫລື ເມັຽ ຫລື ລູກ;

2. ບຸກຄົນທີ່ເປັນຍາດສາຍເລືອດດຽວກັນ ຄື ພໍ່ ແມ່, ປູ່ຍ່າ, ພໍ່ເຖົ້າ, ແມ່ເຖົ້າ ຂຶ້ນເມືອກັບລູກ, ຫລານ, ເຫລນຕໍ່ໆລົງມາ, ລະຫວ່າງ ພໍ່ລ້ຽງ, ແມ່ລ້ຽງ ກັບ ລູກລ້ຽງ, ລະຫວ່າງພໍ່ນ້າ, ແມ່ນ້າ ກັບ ລູກນ້າ, ລະຫວ່າງ ລູກລ້ຽງ ກັບ ລູກຄີງ, ລະຫວ່າງ ອ້າຍ ເອື້ອຍນ້ອງ, ລະຫວ່າງ ລຸງ ປ້າ, ອາວອາ, ນ້າກັບຫລານ.

## ໝວດທີ 3 ລະບຽບການແຕ່ງດອງ

### ມາດຕາ 11. ການພິຈາລະນາ ແລະ ການຈົດທະບຽນແຕ່ງດອງ

ຄູ່ບ່າວສາວ ທີ່ມີຈຸດປະສົງຢາກແຕ່ງດອງນຳກັນ ຕ້ອງເຮັດຄຳຮ້ອງເປັນລາຍລັກອັກສອນແລ້ວຍື່ນຕໍ່ເຈົ້າໜ້າທີ່ທະບຽນຄອບຄົວ.

ເຈົ້າໜ້າທີ່ທະບຽນຄອບຄົວ ຕ້ອງພິຈາລະນາຄຳຮ້ອງຂໍແຕ່ງດອງ ໃນກຳນົດບໍ່ໃຫ້ເກີນ ໜຶ່ງເດືອນ ນັບແຕ່ມື້ໄດ້ຮັບຄຳຮ້ອງຂໍນັ້ນເປັນຕົ້ນໄປ.

ຖ້າຫາກເຫັນວ່າ ຄູ່ບ່າວສາວນັ້ນ ມີເງື່ອນໄຂຄົບຖ້ວນ ເຈົ້າໜ້າທີ່ທະບຽນຄອບຄົວ ກໍຈະຮຽກພວກກ່ຽວເຂົ້າມາທຳການຈົດທະບຽນແຕ່ງດອງ ຊ້ອງໜ້າພະຍານ ສາມຄົນ.

### ມາດຕາ 12. ພິທີແຕ່ງດອງ

ພິທີແຕ່ງດອງຕາມຮີດຄອງປະເພນີຈະເຮັດ ຫລື ບໍ່ເຮັດກໍໄດ້, ຈະເຮັດພ້ອມ ຫລື ລຸນຫລັງການຈົດທະບຽນແຕ່ງດອງນັ້ນກໍໄດ້ ແຕ່ບໍ່ໃຫ້ມີຜົນສະທ້ອນທາງດ້ານກົດໝາຍ.

ສາຍພົວພັນ ຜົວເມັຽ ຈະເກີດຂຶ້ນນັບແຕ່ມື້ທີ່ໄດ້ຈົດທະບຽນແຕ່ງດອງເປັນຕົ້ນໄປ.

## ໝວດທີ 4 ສາຍພົວພັນລະຫວ່າງຜົວເມັຽ

### ມາດຕາ 13. ສິດ ແລະ ພັນທະຂອງຜົວເມັຽ

ຢູ່ໃນຄອບຄົວ ຜົວ ແລະ ເມັຽ ມີສິດສະເໝີພາບກັນໃນທຸກດ້ານ. ຜົວ ເມັຽ ພ້ອມກັນຕົກລົງບັນຫາພາຍໃນຄອບຄົວຢ່າງເປັນເອກະພາບ. ຜົວ ເມັຽ ມີພັນທະຮັກແພງ, ເຄົາລົບນັບຖື, ເບິ່ງແຍງ ແລະ ຊ່ວຍເຫລືອຊຶ່ງກັນ ແລະກັນພ້ອມກັນລ້ຽງລູກ, ສຶກສາອົບຮົມລູກ ແລະ ກໍ່ສ້າງກັນໃຫ້ກາຍເປັນຄອບຄົວທີ່ມີຄວາມສາມັກຄີ, ມີຄວາມສຸກ ແລະ ກ້າວໜ້າ.

### ມາດຕາ 14. ສິດໃນການເຄື່ອນໄຫວຂອງຜົວເມັຽ

ຜົວ ເມັຽ ມີສິດເຄື່ອນໄຫວທາງດ້ານການເມືອງ, ເສດຖະກິດ, ວັດທະນະທຳ ແລະ ສັງຄົມ.

ການເລືອກບ່ອນຢູ່ຂອງຄອບຄົວ ແມ່ນ ການຕົກລົງເປັນເອກະພາບຂອງຄູ່ຜົວເມັຽ.

**ມາດຕາ 15. ສິດໃນການເລືອກນາມສະກຸນ**

ຜົວ ເມັຍ ມີສິດເລືອກເອົານາມສະກຸນ ຂອງຜົວ ຫລື ເມັຍ ເພື່ອເປັນນາມສະກຸນຂອງຄອບຄົວ ຫລື ຜົວ ເມັຍຈະຮັກສານາມສະກຸນເດີມຂອງໃຜລາວໄວ້ກໍໄດ້.

## ໝວດທີ 5 ການສິ້ນສຸດການເປັນຜົວເມັຍກັນ

**ມາດຕາ 16. ສາຍເຫດຂອງການສິ້ນສຸດການເປັນຜົວເມັຍກັນ**

ການເປັນຜົວເມັຍກັນ ຈະສິ້ນສຸດລົງດ້ວຍການເສັຍຊີວິດຂອງຜົວ ຫລື ເມັຍ ຫລື ການປະກາດຂອງສານວ່າຜົວ ຫລື ເມັຍເປັນຜູ້ເສັຍຊີວິດ, ຄໍາຕັດສິນຂອງສານທີ່ຮັບຮູ້ການແຕ່ງດອງເປັນໂມຄະ ແລະ ການຢ່າຮ້າງ.

**ມາດຕາ 17. ການແຕ່ງດອງເປັນໂມຄະ**

ການແຕ່ງດອງເປັນໂມຄະ ແມ່ນ ການແຕ່ງດອງທີ່ລະເມີດເງື່ອນໄຂຂອງການແຕ່ງດອງ ຊຶ່ງໄດ້ກໍານົດໄວ້ໃນມາດຕາ 9 ແລະ 10 ຂອງກົດໝາຍສະບັບນີ້.

**ມາດຕາ 18. ການລົບລ້າງການແຕ່ງດອງທີ່ເປັນໂມຄະ**

ການລົບລ້າງການແຕ່ງດອງທີ່ເປັນໂມຄະ ແມ່ນ ສິດອໍານາດຂອງສານປະຊາຊົນ.

ໄອຍະການປະຊາຊົນ, ເຈົ້າໜ້າທີ່ທະບຽນຄອບຄົວ, ພໍ່ແມ່ຂອງຜົວ ຫລື ເມັຍ, ຜົວ ຫລື ເມັຍເອງ ມີສິດຮ້ອງຂໍໃຫ້ລົບລ້າງການແຕ່ງດອງທີ່ເປັນໂມຄະ.

**ມາດຕາ 19. ຜົນສະທ້ອນຂອງການແຕ່ງດອງທີ່ເປັນໂມຄະ**

ເມື່ອການແຕ່ງດອງທີ່ເປັນໂມຄະ ຫາກຖືກລົບລ້າງແລ້ວ ສາຍຜົວເມັຍ ກໍຈະຂາດຈາກກັນ ແຕ່ລູກທີ່ມີຢູ່ໃນທ້ອງ ຫລື ເກີດໃນເວລາເປັນຜົວເມັຍກັນນັ້ນ ກໍໃຫ້ຖືວ່າເປັນລູກທີ່ຖືກຕ້ອງຕາມກົດໝາຍ.

ຊັບສົມບັດທີ່ໄດ້ມາໃນເວລາທີ່ຜົວເມັຍຢູ່ຮ່ວມກັນກ່ອນການລົບລ້າງ ການແຕ່ງດອງນັ້ນ ກໍໃຫ້ປະຕິບັດຕາມລະບຽບການທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍກໍາມະສິດ.

**ມາດຕາ 20 (ໃໝ່). ສາເຫດຂອງການຢ່າຮ້າງ**

ຜົວ ຫລື ເມັຍຈະຂໍຢ່າຮ້າງກັນໄດ້ ເມື່ອມີສາເຫດໃດໜຶ່ງດັ່ງນີ້ :

1. ທໍາມິດສະຈານ;

2. ໃຊ້ຄວາມຮຸນແຮງ ຫລື ປ້ອຍດ່າດ້ວຍຄວາມຫຍາບຊ້າຕໍ່ກັນ ຫລື ຕໍ່ພໍ່ແມ່ ແລະ ຍາດພີ່ນ້ອງ ຫລື ມີການປະພຶດທີ່ບໍ່ເໝາະສົມຢ່າງຮ້າຍແຮງ ເຊັ່ນ: ດື່ມເຫລົ້າ ຫລື ຫລິ້ນການພະນັນເປັນອາຈິນ ທີ່ບໍ່ສາມາດຈະຢູ່ນໍາກັນໄດ້;

3. ໜີໄປໂດຍບໍ່ຄອບກັນ ແລະ ບໍ່ໄດ້ສົ່ງຂ່າວ ຫລື ຊັບມາລ້ຽງຄອບຄົວ ເປັນເວລາ ສາມປີຂຶ້ນໄປ;

4. ຜົວໄປບວດເປັນພິກຂຸ, ສາມະເນນ ຫລື ຜ້າຂາວ ຫລື ເມັຍໄປບວດເປັນ ນາງຂາວ ເລີຍ;

5. ຖືກສານຕັດສິນລົງໂທດ ຕັດອິດສະລະພາບ ແຕ່ ຫ້າປີຂຶ້ນໄປ;

6. ເປັນພະຍາດ ຊຶ່ງເປັນອັນຕະລາຍຢ່າງຮ້າຍແຮງທີ່ບໍ່ສາມາດຈະຢູ່ນໍາກັນໄດ້;

7. ເປັນຄົນເສັຽຈິດຈົນບໍ່ສາມາດຈະຢູ່ນໍາກັນໄດ້;

8. ບໍ່ສາມາດຮ່ວມປະເວນີທາງເພດ;

9. ຜົວເມັຍຫາກບໍ່ສາມາດດໍາລົງຊີວິດຢູ່ຮ່ວມກັນຕໍ່ໄປໄດ້.

### ມາດຕາ 21. ການພິຈາລະນາຄະດີຢ່າຮ້າງ

ເມື່ອຜົວເມັຍ ຫລື ຜົວ ຫລື ເມັຍ ໄດ້ຍື່ນຄໍາຮ້ອງຂໍຢ່າຮ້າງແລ້ວ ສານປະຊາຊົນ ຕ້ອງອົບຮົມໃຫ້ຜົວເມັຍຄືນດີກັນ. ຖ້າວ່າເຂົາເຈົ້າ ຫາກບໍ່ສົມຍອມຄືນດີກັນໃນທັນໃດ ກໍຕ້ອງໃຫ້ເວລາເຂົາເຈົ້າໄປຄົ້ນຄິດ ໃນກໍານົດບໍ່ໃຫ້ເກີນ ສາມເດືອນ.

ພາຍຫລັງທີ່ຜົວເມັຍ ຫາກບໍ່ສາມາດຄືນດີກັນໄດ້ແລ້ວ ສານກໍຈະຕັດສິນໃຫ້ຜົວເມັຍຢ່າຮ້າງກັນ ຖ້າເຫັນວ່າ ຜົວເມັຍ ຫາກບໍ່ສາມາດດໍາລົງຊີວິດຢູ່ຮ່ວມກັນຕໍ່ໄປ, ບໍ່ສາມາດຄຸ້ມຄອງ ແລະ ຮັກສາຄອບຄົວໄດ້. ໃນການຕັດສິນກ່ຽວກັບການຢ່າຮ້າງ ສານຕ້ອງວາງມາດຕະການປ້ອງກັນຜົນປະໂຫຍດຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ແລະ ຂອງຜົວ ຫລື ເມັຍທີ່ບໍ່ສາມາດອອກແຮງງານ ເພື່ອດໍາລົງຊີວິດໄດ້.

ພາຍຫລັງທີ່ສານໄດ້ຕັດສິນຢ່າຮ້າງແລ້ວ ສານຕ້ອງສໍາເນົາຄໍາຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດນັ້ນເປັນສອງສະບັບແລ້ວ ສົ່ງໃຫ້ເຈົ້າໜ້າທີ່ທະບຽນຄອບຄົວ ເພື່ອຈົດທະບຽນຢ່າຮ້າງ ແລ້ວມອບໃຫ້ຄູ່ຜົວເມັຍຜູ້ລະສະບັບ.

### ມາດຕາ 22. ການບໍ່ອະນຸຍາດໃຫ້ຂໍຢ່າຮ້າງ

ຜົວບໍ່ມີສິດຈະຂໍຢ່າຮ້າງໄດ້ ໃນເວລາທີ່ເມັຍພວມຖືພາມານ ຫລື ຫລັງຈາກທີ່ລູກນັ້ນເກີດມາບໍ່ທັນຮອດໜຶ່ງປີ.

### ມາດຕາ 23. ການຮັກສາ ແລະ ລ້ຽງດູລູກ

ຖ້າວ່າຜົວເມັຍ ຫາກບໍ່ເຫັນດີນໍາກັນ ກ່ຽວກັບການຮັກສາ ແລະ ລ້ຽງດູລູກ ພາຍຫລັງການຢ່າຮ້າງແລ້ວ ສານຕ້ອງຕັດສິນມອບເດັກໃຫ້ຢູ່ນໍາພໍ່ ຫລື ນໍາແມ່ໂດຍຖືເອົາຕາມຜົນປະໂຫຍດຂອງເດັກ.

ຜົວເມັຍ ທີ່ໄດ້ຢ່າຮ້າງກັນແລ້ວຕ້ອງໄດ້ເບິ່ງແຍງ, ລ້ຽງດູ ແລະ ສຶກສາອົບຮົມລູກ. ສານກໍານົດການໃຊ້ຈ່າຍ ໃນການລ້ຽງດູລູກ ຈົນເຖິງກະສຽນອາຍຸ ຕາມການຕົກລົງຂອງຜົວເມັຍ ຫລື ຕາມຄໍາຕັດສິນຂອງສານ ໃນກໍລະນີທີ່ຜົວເມັຍ ຫາກຕົກລົງກັນບໍ່ໄດ້.

### ມາດຕາ 24. ການຮ້ອງຂໍຄ່າລ້ຽງດູ

ພາຍຫລັງການຢ່າຮ້າງກັນແລ້ວ ເມັຽ ຫລື ຜົວທີ່ເຈັບເປັນເນື່ອງຈາກສາຍພົວພັນຜົວເມັຽ ໃນເມື່ອກ່ອນ ແລະ ຂາດເຂີນ ຊຶ່ງບໍ່ສາມາດຈະລ້ຽງຕົນເອງໄດ້ ກໍມີສິດຮ້ອງຂໍໃຫ້ສານພິຈາລະນາຕັດສິນໃຫ້ຜົວ ຫລື ເມັຽຈ່າຍຄ່າລ້ຽງດູໄດ້ ໃນກໍລະນີທີ່ຝ່າຍທີ່ຖືກຮ້ອງຂໍ ຫາກມີຄວາມສາມາດທາງດ້ານເສດຖະກິດ ແຕ່ການຈ່າຍຄ່າລ້ຽງດູນັ້ນບໍ່ໃຫ້ເກີນ ຫນຶ່ງປີ.

### ມາດຕາ 25. ການເອົາກັນຄືນເປັນຜົວເມັຽ

ຜົວເມັຽທີ່ໄດ້ຢ່າຮ້າງກັນແລ້ວ ຈະເອົາກັນຄືນອີກ ກໍຕ້ອງຈົດທະບຽນຄືນໃຫມ່.

## ຫມວດທີ 6 ຊັບສົມບັດຂອງຄູ່ຜົວເມັຽ

### ມາດຕາ 26. ຊັບເດີມ ແລະ ສິນສົມສ້າງ

ຊັບເດີມ ແມ່ນ ຊັບສົມບັດ ທີ່ຜົວ ຫລື ເມັຽ ໄດ້ມາກ່ອນການແຕ່ງດອງ ຫລື ແມ່ນ ຊັບສົມບັດທີ່ໄດ້ມາຈາກການສືບທອດມູນມໍຣະດົກ ຫລື ຈາກການມອບ ຫລື ການຍົກຊັບໃຫ້ຜົວ ຫລື ເມັຽສະເພາະພາຍຫລັງການແຕ່ງດອງ ແລະ ແມ່ນຊັບສົມບັດທີ່ຍັງຄົງຢູ່ຫລືປ່ຽນສະພາບໄປເປັນຊັບສິ່ງຂອງໃຫມ່ແລ້ວ.

ສິນສົມສ້າງ ແມ່ນຊັບສົມບັດທີ່ຄູ່ຜົວເມັຽນັ້ນສ້າງສາ ແລະ ຫາມາໄດ້ໃນເວລາເປັນຜົວເມັຽນຳກັນເວັ້ນເສັຽແຕ່ຊັບສິ່ງຂອງທີ່ເປັນເຄື່ອງໃຊ້ສ່ວນຕົວ ຊຶ່ງບໍ່ມີມູນຄ່າສູງ

### ມາດຕາ27. ການນຳໃຊ້ສິນສົມສ້າງ

ຜົວເມັຽ ມີສິດເທົ່າທຽມກັນ ກ່ຽວກັບສິນສົມສ້າງ ໂດຍບໍ່ຂຶ້ນກັບວ່າຈະແມ່ນຜົວຫລືເມັຽ ຫາກເປັນຜູ້ຫາຊັບສິ່ງຂອງນັ້ນມາໄດ້. ຜົວເມັຽ ມີສິດນຳໃຊ້ສິນສົມສ້າງ ຕາມຄວາມຮຽກຮ້ອງຕ້ອງການຂອງຄອບຄົວ. ສຳລັບສິດໄດ້ຮັບຫມາກຜົນ ແລະຊີ້ຂາດກ່ຽວກັບສິນສົມສ້າງ ຊຶ່ງມີມູນຄ່າສູງນັ້ນ ຕ້ອງໄດ້ຮັບຄວາມເຫັນດີ ເຫັນພ້ອມນຳກັນເສັຽກ່ອນ.

### ມາດຕາ 28. ການແບ່ງປັນຊັບສົມບັດຂອງຄູ່ຜົວເມັຽ

ການແບ່ງປັນຊັບສົມບັດຂອງຄູ່ຜົວເມັຽໃຫ້ປະຕິບັດດັ່ງນີ້:

1. ຊັບເດີມຂອງຝ່າຍໃດ ກໍ່ໃຫ້ເປັນກຳມະສິດຂອງຝ່າຍນັ້ນ;

2. ສິນສົມສ້າງຂອງຄູ່ຜົວເມັຽ ໃຫ້ແບ່ງກັນຄົນລະເຄິ່ງເວັ້ນເສັຽແຕ່ ຜົວ ຫລື ເມັຽຫາກເປັນຜູ້ມີຄວາມຜິດຕໍ່ສາຍຜົວເມັຽ ຫລື ຕໍ່ສິນສົມສ້າງ. ຝ່າຍທີ່ຜິດນັ້ນ ກໍຈະໄດ້ຮັບພຽງແຕ່ ຫນຶ່ງສ່ວນສາມ ຂອງສິນສົມສ້າງເທົ່ານັ້ນ, ໃນກໍລະນີທີ່ລູກຍັງບໍ່ທັນເຖິງກະສຽນອາຍຸ ຫາກໄດ້ຢູ່ນຳຜູ້ໃດ ຜູ້ນັ້ນ ອາດຈະໄດ້ຮັບສ່ວນແບ່ງປັນຫລາຍກ່ວາ ໂດຍແມ່ນສານຈະເປັນຜູ້ຕັດສິນ.

ສິນສົມສ້າງ ຈະໄດ້ແບ່ງປັນກັນພາຍຫລັງທີ່ຜົວເມັຽນັ້ນໄດ້ຢ່າຮ້າງກັນ. ໃນກໍລະນີທີ່ຜົວ ເມັຽຫາກໄດ້ແຍກກັນຢູ່ ຫລື ຜົວ ເມັຽ ຫາກໄດ້ລັກເອົາສິນສົມສ້າງ ໄປນຳໃຊ້ໃນທາງທີ່ບໍ່ຖືກຕ້ອງ ຫລື ບໍ່ມີ

ຄວາມບໍລິສຸດໃຈ ຕໍ່ສິນສົມສ້າງນັ້ນ ອາດຈະແບ່ງປັນສິນສົມສ້າງ ໃນເວລາທີ່ບໍ່ທັນໄດ້ຢ່າຮ້າງກັນກໍ່ໄດ້.

ພາກທີ III ສິດ ແລະ ພັນທະ ຂອງພໍ່ແມ່ ແລະ ລູກ

**ໝວດທີ 1 ການຮັບຮູ້ເດັກເປັນລູກ**

**ມາດຕາ 29. ການໄດ້ສິດ ແລະ ພັນທະຂອງພໍ່ ແມ່ ແລະ ລູກ**

ສິດ ແລະ ພັນທະຂອງພໍ່ແມ່ ແລະ ລູກ ແມ່ນ ເກີດຂຶ້ນບົນພື້ນຖານການກຳເນີດຂອງເດັກ ທີ່ກົດໝາຍໄດ້ກຳນົດໄວ້.

ເດັກອາດຈະເກີດມາຈາກ ພໍ່ແມ່ ທີ່ແຕ່ງດອງນຳກັນຢ່າງຖືກຕ້ອງ ຫລື ເກີດຈາກ ພໍ່ແມ່ ທີ່ບໍ່ໄດ້ແຕ່ງດອງນຳກັນ ແຕ່ຜູ້ເປັນພໍ່ ໄດ້ສະໝັກໃຈຮັບຮູ້ດ້ວຍຕົນເອງວ່າ ເປັນພໍ່ຂອງເດັກນັ້ນແທ້ ຫລື ຜູ້ເປັນພໍ່ໄດ້ຮັບຮູ້ ດ້ວຍຄຳຕັດສິນຂອງສານ.

**ມາດຕາ 30. ການຮັບຮູ້ການເປັນພໍ່**

ການຮັບຮູ້ການເປັນພໍ່ ແມ່ນ ຈະເຮັດຂຶ້ນໄດ້ໃນກໍລະນີ ທີ່ລູກຫາກເກີດຈາກ ພໍ່ແມ່ ທີ່ບໍ່ໄດ້ແຕ່ງດອງນຳກັນ.

ການຮັບຮູ້ການເປັນພໍ່ ໂດຍສະໝັກໃຈຕ້ອງໃຫ້ພໍ່ແມ່ຂອງເດັກຍື່ນຄຳຮ້ອງຮ່ວມກັນ ຊຶ່ງໃນຄຳຮ້ອງນັ້ນ ພໍ່ຂອງເດັກກໍຮັບຮູ້ວ່າຕົນເປັນພໍ່ແທ້ ແລະ ແມ່ ກໍເຫັນດີນຳຄຳຮ້ອງນັ້ນ. ຖ້າວ່າແມ່ຫາກເສັຽຊີວິດແລ້ວ ການຮັບຮູ້ການເປັນພໍ່ນັ້ນ ຈະເຮັດຄຳຮ້ອງແຕ່ຝ່າຍດຽວກໍໄດ້.

ໃນກໍລະນີ ທີ່ເດັກຫາກເຖິງກະສຽນອາຍຸແລ້ວ ການຮັບຮູ້ການເປັນພໍ່ ຈະເຮັດຂຶ້ນໄດ້ກໍຕໍ່ເມື່ອຫາກມີຄວາມເຫັນດີຂອງເດັກເທົ່ານັ້ນ. ການທີ່ພໍ່ຂອງເດັກໄດ້ແຕ່ງດອງກັບຍິງຜູ້ອື່ນແລ້ວນັ້ນ ກໍບໍ່ໃຫ້ເປັນອຸບປະສັກ ຕໍ່ການຮັບຮູ້ການເປັນພໍ່ແຕ່ຢ່າງໃດ.

ໃນເມື່ອຜູ້ເປັນພໍ່ຫາກປະຕິເສດວ່າ ຕົນບໍ່ໄດ້ເປັນພໍ່ຂອງເດັກແລ້ວຜູ້ເປັນແມ່, ຜູ້ຮັບຜິດຊອບ ຫລື ຜູ້ປົກຄອງເດັກ ກໍມີສິດເຮັດຄຳຮ້ອງເຊັ່ນດຽວກັນ ເພື່ອໃຫ້ສານພິຈາລະນາ ຕັດສິນໃຫ້ຮັບຮູ້ການເປັນພໍ່.

ສານຈະຕັດສິນໃຫ້ມີການຮັບຮູ້ການເປັນພໍ່ໄດ້ ກໍຕໍ່ເມື່ອຫາກມີກໍລະນີດັ່ງນີ້:

ການຢູ່ຮ່ວມກັນ ແລະ ການສ້າງເສດຖະກິດລວມ ລະຫວ່າງ ແມ່ຂອງເດັກ ກັບຜູ້ຈະຮັບຮູ້ການເປັນພໍ່ ກ່ອນເດັກເກີດ;

ການເອົາໃຈໃສ່ເບິ່ງແຍງລ້ຽງດູລູກ ຫລື ການສຶກສາອົບຮົມລູກຮ່ວມກັນ;

ການມີຫລັກຖານຢັ້ງຢືນວ່າຜູ້ກ່ຽວເປັນພໍ່.

**ມາດຕາ 31. ຊື່, ນາມສະກຸນ ແລະ ສັນຊາດຂອງເດັກ**

ພໍ່ແມ່ ເປັນຜູ້ມີສິດເລືອກຊື່ຂອງເດັກໃຫ້ຕາມໃຈມັກ ແລະ ຕາມການເຫັນດີນຳກັນ. ຜູ້ເປັນລູກມີສິດປ່ຽນຊື່ຂອງຕົນ ຕາມລະບຽບທີ່ໄດ້ບົ່ງໄວ້ ຖ້າວ່າຕົນຫາກເຖິງອາຍຸ ສິບແປດປີແລ້ວ.

ນາມສະກຸນຂອງເດັກ ແມ່ນ ໃສ່ຕາມນາມສະກຸນຂອງພໍ່ແມ່ ຖ້າວ່າ ພໍ່ແມ່ ຫາກຖືນາມສະກຸນດຽວກັນ.

ຖ້າວ່າ ພໍ່ແມ່ຫາກຖືນາມສະກຸນຕ່າງກັນ ເດັກອາດໃສ່ນາມສະກຸນຂອງພໍ່ ຫລື ຂອງແມ່ ກໍໄດ້ ຕາມການເຫັນດີຂອງພໍ່ແມ່ ຖ້າຫາກຕົກລົງກັນບໍ່ໄດ້ແລ້ວ ເດັກຈະໃສ່ນາມສະກຸນ ຕາມຄຳຕັດສິນຂອງສານ.

ເມື່ອມີການຢ່າຮ້າງ ຫລື ຮັບຮູ້ວ່າການແຕ່ງດອງເປັນໂມຄະແລ້ວ ນາມສະກຸນຂອງລູກຈະບໍ່ມີການປ່ຽນແປງ.

ຖ້າວ່າພໍ່ ຫລື ແມ່ ທີ່ລູກຍັງຢູ່ນຳ ຫາກຕ້ອງການໃຫ້ລູກໃສ່ນາມສະກຸນຂອງຕົນ ພາຍຫລັງການຢ່າຮ້າງ ຫລື ການຮັບຮູ້ການແຕ່ງດອງເປັນໂມຄະແລ້ວ ກໍມີສິດໃຫ້ລູກທີ່ຍັງບໍ່ທັນເຖິງກະສຽນອາຍຸນັ້ນ ປ່ຽນນາມສະກຸນນຳຕົນໄດ້.

ສັນຊາດຂອງເດັກ ແມ່ນ ໃຫ້ກຳນົດຕາມສັນຊາດຂອງພໍ່ແມ່ ຖ້າວ່າ ພໍ່ແມ່ ຫາກມີສັນຊາດດຽວກັນ;

ເມື່ອພໍ່ແມ່ຫາກມີສັນຊາດຕ່າງກັນ ເດັກອາດຈະເອົາສັນຊາດຂອງພໍ່ ຫລື ແມ່ ກໍໄດ້ໂດຍປະຕິບັດຕາມກົດໝາຍ ວ່າດ້ວຍສັນຊາດລາວ.

### ມາດຕາ 32. ພັນທະຂອງພໍ່ແມ່ ໃນການສຶກສາອົບຮົມລູກ

ພໍ່ແມ່ຕ້ອງສຶກສາອົບຮົມລູກຂອງຕົນ ໃຫ້ມີແນວຄິດຮັກຊາດ, ຮັກຄວາມກ້າວໜ້າ ແລະ ມີແບບແຜນການດຳລົງຊີວິດທີ່ຜ່ອງໃສ, ກໍ່ສ້າງລູກໃຫ້ມີການເຄື່ອນໄຫວ ທີ່ເປັນປະໂຫຍດແກ່ສັງຄົມ.

ຖ້າວ່າ ພໍ່ແມ່ຫາກບໍ່ປະຕິບັດພັນທະຂອງຕົນ ໃນການສຶກສາອົບຮົມລູກ, ໃຊ້ສິດໃນການເປັນພໍ່ແມ່ເກີນຂອບເຂດ, ໃຊ້ການກະທຳຕໍ່ລູກຢ່າງໂຫດຮ້າຍ, ເຮັດສິ່ງຫຍາບຊ້າ ແລະ ບໍ່ຈິບງາມຕໍ່ລູກແລ້ວ ຜູ້ກ່ຽວ ກໍຈະຖືກສານປົດສິດໃນການເປັນພໍ່ແມ່, ແຕ່ພໍ່ແມ່ຍັງຕ້ອງສືບຕໍ່ປະຕິບັດພັນທະ ໃນການເບິ່ງແຍງລ້ຽງດູລູກຢູ່.

ໃນກໍລະນີ ທີ່ພໍ່ແມ່ຊຶ່ງໄດ້ຖືກປົດສິດແລ້ວນັ້ນ ຫາກໄດ້ສ້າງຕົນດີຂຶ້ນ ສານກໍອາດຈະຄືນສິດໃນການເປັນພໍ່ແມ່ໃຫ້ແກ່ຜູ້ກ່ຽວ.

### ມາດຕາ 33. ພັນທະຂອງພໍ່ແມ່ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ

ພໍ່ແມ່ ມີສິດ ແລະ ພັນທະເທົ່າທຽມກັນ ໃນການປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ, ພໍ່ແມ່ ເປັນຜູ້ຕາງໜ້າຢ່າງຖືກກົດໝາຍຂອງລູກ ທີ່ຍັງບໍ່ທັນເຖິງກະສຽນອາຍຸ, ມີພັນທະປົກປ້ອງສິດ ແລະ ຜົນປະໂຫຍດຂອງລູກ ຢູ່ໃນສານ, ສະຖານທີ່ເຮັດວຽກ, ໂຮງຮຽນ ແລະ ອື່ນໆ.

ຖ້າວ່າເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫາກເຮັດສັນຍາໂດຍບໍ່ມີການເຫັນດີຂອງພໍ່ແມ່ແລ້ວ ພໍ່ແມ່ມີສິດຮ້ອງຂໍຕໍ່ສານ ເພື່ອໃຫ້ລຶບລ້າງສັນຍາທີ່ເປັນໂມຄະ. ນອກຈາກນີ້ ພໍ່ແມ່ຍັງເປັນຜູ້ຕາງໜ້າຂອງລູກຕົນ ເຂົ້າຮ່ວມໃນການພິຈາລະນາຄະດີ ຊຶ່ງລູກຂອງຕົນເປັນຈຳເລີຍ ແລະ ຈະໄດ້ຮັບຜິດຊອບທາງແພ່ງແທນລູກຂອງຕົນ.

### ມາດຕາ 34. ຊັບສິນບັດຂອງພໍ່ແມ່ ແລະ ລູກ

ເມື່ອພໍ່ແມ່ຫາກຍັງມີຊີວິດຢູ່ນັ້ນ ລູກຈະບໍ່ມີກຳມະສິດກ່ຽວກັບຊັບສິນບັດຂອງພໍ່ແມ່ ແລະ ພໍ່ແມ່ກໍບໍ່ມີກຳມະສິດກ່ຽວກັບຊັບສິນບັດຂອງລູກ. ຖ້າວ່າຊັບສິນບັດຫາກເປັນຂອງເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ເວລານັ້ນພໍ່ແມ່ເປັນຜູ້ມີສິດຄຸ້ມຄອງຊັບສິນບັດດັ່ງກ່າວ ຕາມລະບຽບການທີ່ບົ່ງໄວ້ສະເພາະ. ໃນກໍລະນີທີ່ມີກຳມະສິດລວມລະຫວ່າງ ພໍ່ແມ່ກັບລູກ ສາຍພົວພັນໃນກຳມະສິດນັ້ນ ຈະໄດ້ປະຕິບັດຕາມມາດຕາ 25 ຂອງກົດໝາຍວ່າດ້ວຍກຳມະສິດ.

### ມາດຕາ 35. ພັນທະຂອງພໍ່ແມ່ໃນການເບິ່ງແຍງລ້ຽງດູລູກ

ພໍ່ແມ່ມີພັນທະເບິ່ງແຍງລ້ຽງດູລູກຂອງຕົນ ທີ່ຍັງບໍ່ທັນເຖິງກະສຽນອາຍຸ ແລະ ລູກທີ່ເຖິງກະສຽນອາຍຸແລ້ວ ແຕ່ຫາກຂາດຄວາມສາມາດອອກແຮງງານ.

ພັນທະລ້ຽງດູລູກນີ້ ຈະຕ້ອງໄດ້ປະຕິບັດຕໍ່ໄປ ເຖິງວ່າພໍ່ແມ່ຈະຍັງຢູ່ຮ່ວມກັນ ຫລື ຢ່າຮ້າງກັນແລ້ວກໍຕາມ, ຄ່າເບິ່ງແຍງລ້ຽງດູລູກອາດຈະຮ້ອງຂໍເອົາໄດ້ທຸກເວລາ ໂດຍບໍ່ມີອາຍຸຄວາມໃນການຮ້ອງຟ້ອງແຕ່ຢ່າງໃດ. ຈຳນວນເງິນທີ່ເປັນຄ່າເບິ່ງແຍງລ້ຽງດູນັ້ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ ແລະ ອາດຈະປ່ຽນແປງໄດ້ຕາມຄຳຕັດສິນຂອງສານ.

ພໍ່ ແລະ ແມ່ ມີສິດຮ້ອງຂໍໃຫ້ສານຫລຸດຜ່ອນຄ່າເບິ່ງແຍງລ້ຽງດູລູກ ໃນກໍລະນີທີ່ຕົນຫາກຕົກຢູ່ໃນສະພາບທີ່ຫຍຸ້ງຍາກທາງດ້ານເສດຖະກິດ.

### ມາດຕາ 36. ພັນທະຂອງລູກໃນການລ້ຽງດູ, ການເບິ່ງແຍງ ແລະ ຊ່ວຍເຫລືອພໍ່ແມ່

ລູກມີພັນທະເບິ່ງແຍງລ້ຽງດູ ແລະ ຊ່ວຍເຫລືອ ພໍ່ແມ່ທີ່ເຖົ້າແກ່, ເຈັບເປັນ, ຂາດຄວາມສາມາດອອກແຮງງານ ແລະ ຕ້ອງການຄວາມຊ່ວຍເຫລືອ. ຈຳນວນເງິນຄ່າລ້ຽງດູພໍ່ແມ່ນັ້ນ ແມ່ນ ໃຫ້ພໍ່ແມ່ ແລະ ລູກຕົກລົງກັນເອງ. ຖ້າຫາກຕົກລົງກັນບໍ່ໄດ້ແລ້ວຈຶ່ງໃຫ້ສານເປັນຜູ້ກຳນົດ ໂດຍອີງໃສ່ຄວາມສາມາດທາງດ້ານເສດຖະກິດຂອງລູກ ແລະ ຈ່າຍເປັນແຕ່ລະເດືອນ.

ລູກອາດຈະພົ້ນຈາກພັນທະໃນການລ້ຽງດູພໍ່ແມ່ຂອງຕົນຖ້າວ່າພໍ່ແມ່ນັ້ນ ຫາກມີການກະທຳທີ່ບໍ່ຖືກຕ້ອງຕາມ ທີ່ໄດ້ບົ່ງໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້.

## ໝວດທີ 2 ການເອົາເດັກມາເປັນລູກລ້ຽງ

### ມາດຕາ 37. ການເອົາເດັກມາເປັນລູກລ້ຽງ

ການເອົາລູກຂອງຜູ້ອື່ນມາເປັນລູກລ້ຽງນັ້ນ ພໍ່ລ້ຽງ ແມ່ລ້ຽງ ແລະ ຍາດພີ່ນ້ອງຂອງພໍ່ລ້ຽງແມ່ລ້ຽງ ໃຫ້ຖືວ່າເດັກຜູ້ນັ້ນຄືກັນກັບລູກຄີງ,ອ້າຍເອື້ອຍນ້ອງຄີງ ແລະ ຫລານຄີງຂອງຕົນ. ສ່ວນເດັກຜູ້ນັ້ນຈະໝົດສິດ ແລະ ພັນທະຈາກພໍ່ແມ່ ແລະ ຍາດພີ່ນ້ອງຄີງຂອງຕົນ.

### ມາດຕາ 38. ເງື່ອນໄຂຂອງການເອົາເດັກມາເປັນລູກລ້ຽງ

ລູກລ້ຽງ ຕ້ອງແມ່ນເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ.ພໍ່ລ້ຽງ ແມ່ລ້ຽງຕ້ອງແມ່ນບຸກຄົນທີ່ເຖິງກະສຽນອາຍຸຊຶ່ງບໍ່ຖືກປົດສິດ ໃນການເປັນພໍ່ແມ່.

ໃນການເອົາເດັກມາເປັນລູກລ້ຽງນັ້ນ ຕ້ອງໃຫ້ມີການເຫັນດີເຫັນພ້ອມ ເປັນລາຍລັກອັກສອນຂອງຜົວເມຍ ແລະ ພໍ່ແມ່ຂອງເດັກນັ້ນເສັຽກ່ອນ ເວັ້ນເສັຽແຕ່ ພໍ່ ຫລື ແມ່ ຂອງເດັກຫາກໄດ້ຖືກປົດສິດໃນການເປັນພໍ່ແມ່ ຫລື ຮັບຮູ້ວ່າ ເປັນຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຫລື ເປັນຜູ້ຫາຍສາບສູນ.

ຖ້າວ່າເດັກນັ້ນຫາກເຖິງກະສຽນອາຍຸ ສິບປີ ແລ້ວຕ້ອງໃຫ້ມີການເຫັນດີຂອງເດັກເອງຕື່ມອີກ.

### ມາດຕາ 39. ລະບຽບກ່ຽວກັບການເອົາເດັກມາເປັນລູກລ້ຽງ

ບຸກຄົນທີ່ຈະເປັນພໍ່ລ້ຽງແມ່ລ້ຽງ ຕ້ອງຍື່ນຄຳຮ້ອງຕໍ່ນາຍບ້ານ ເພື່ອພິຈາລະນາ ພາຍໃນກຳນົດບໍ່ໃຫ້ເກີນຫນຶ່ງເດືອນ

ຖ້າເຫັນຄວນ ຈຶ່ງອອກຄຳຕົກລົງກ່ຽວກັບການເປັນລູກລ້ຽງ ແລ້ວສົ່ງໃຫ້ເຈົ້າຫນ້າທີ່ທະບຽນຄອບຄົວ ເພື່ອຈົດທະບຽນພາຍໃນກຳນົດ ສາມວັນ ແລ້ວມອບໃຫ້ພໍ່ລ້ຽງ ແມ່ລ້ຽງ.

### ມາດຕາ 40. ການຮັກສາຄວາມລັບ ກ່ຽວກັບການເປັນລູກລ້ຽງ

ບຸກຄົນຜູ້ໃດທີ່ໄດ້ເປີດເຜີຍຄວາມລັບ ກ່ຽວກັບການເປັນລູກລ້ຽງ ໂດຍບໍ່ໄດ້ມີການເຫັນດີຂອງພໍ່ລ້ຽງແມ່ລ້ຽງ ຫລື ໃນກໍລະນີທີ່ພໍ່ລ້ຽງແມ່ລ້ຽງ ຫາກໄດ້ເສຍຊີວິດແລ້ວ ຖ້າບໍ່ໄດ້ມີການເຫັນດີຂອງເຈົ້າຫນ້າທີ່ທະບຽນຄອບຄົວ ບຸກຄົນນັ້ນ ກໍຈະມີຄວາມຮັບຜິດຊອບທາງອາຍາຕາມວັກທີ 1 ຂອງມາດຕາ 95 ຂອງກົດຫມາຍອາຍາ.

### ມາດຕາ 41. ຜົນຂອງການເປັນລູກລ້ຽງ

ສາຍພົວພັນ ລະຫວ່າງ ພໍ່ລ້ຽງແມ່ລ້ຽງ ກັບ ລູກລ້ຽງ ໄດ້ເກີດຂຶ້ນນັບແຕ່ມື້ໄດ້ຈົດທະບຽນເປັນຕົ້ນໄປ.

ລູກລ້ຽງຕ້ອງໃສ່ນາມສະກຸນນຳພໍ່ລ້ຽງແມ່ລ້ຽງ ຖ້າວ່າພໍ່ລ້ຽງແມ່ລ້ຽງຫາກຍື່ນຄຳຮ້ອງຂໍໃຫ້ປ່ຽນນາມສະກຸນ.

ສຳລັບເດັກທີ່ໃສ່ຊື່ມາກ່ອນແລ້ວ ຖ້າວ່າພໍ່ລ້ຽງແມ່ລ້ຽງຫາກເຫັນວ່າບໍ່ເຫມາະສົມກໍອາດຈະປ່ຽນຊື່ໃຫມ່ໃຫ້ເດັກກໍໄດ້. ໃນກໍລະນີທີ່ເດັກນັ້ນຫາກມີອາຍຸເຖິງ ສິບປີແລ້ວ ຈະປ່ຽນຊື່ໃຫມ່ໄດ້ກໍຕໍ່ເມື່ອໄດ້ຮັບການເຫັນດີຈາກເດັກນັ້ນເສັຽກ່ອນ.

### ມາດຕາ 42. ການສິ້ນສຸດການເປັນລູກລ້ຽງ

ການເປັນລູກລ້ຽງຈະສິ້ນສຸດລົງຕາມຄຳຕັດສິນຂອງສານເມື່ອມີການຮັບຮູ້ວ່າການເອົາເດັກມາເປັນລູກລ້ຽງນັ້ນເປັນໂມຄະ ຫລື ມີການລົບລ້າງການເປັນລູກລ້ຽງ.

ການເອົາເດັກມາເປັນລູກລ້ຽງຈະຖືວ່າເປັນໂມຄະ ຖ້າຫາກໄດ້ເຮັດຂຶ້ນດ້ວຍການໃຊ້ເອກະສານປອມ ຫລື ໂດຍບຸກຄົນທີ່ບໍ່ສາມາດເປັນພໍ່ລ້ຽງແມ່ລ້ຽງໄດ້.

ການເປັນລູກລ້ຽງຊຶ່ງບໍ່ຕອບສະໜອງຜົນປະໂຫຍດຂອງເດັກ ຫລື ພໍ່ລ້ຽງແມ່ລ້ຽງນັ້ນໄດ້ ຫລື ເຮັດຂຶ້ນດ້ວຍການລະເມີດເງື່ອນໄຂຂອງການເອົາເດັກມາເປັນລູກລ້ຽງ ຊຶ່ງໄດ້ບົ່ງໄວ້ໃນມາດຕາ 38 ຂອງກົດໝາຍສະບັບນີ້ກໍຈະຖືກລົບລ້າງ.

ພໍ່ຄີງແມ່ຄີງ, ພໍ່ລ້ຽງແມ່ລ້ຽງ ຫລື ບຸກຄົນອື່ນທີ່ມີຜົນປະໂຫຍດກ່ຽວຂ້ອງກໍມີສິດຮ້ອງຂໍລົບລ້າງການເອົາເດັກມາເປັນລູກລ້ຽງໄດ້.

## ໝວດທີ 3 ການແຕ່ງຕັ້ງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ

### ມາດຕາ 43. ໜ້າທີ່ຂອງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ

ຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດມີໜ້າທີ່ລ້ຽງດູ, ສຶກສາອົບຮົມເດັກທີ່ຍັງບໍ່ທັນເຖິງກະສຽນອາຍຸ ຊຶ່ງຂາດການເບິ່ງແຍງຈາກພໍ່ແມ່ທີ່ໄດ້ເສັຽຊີວິດ ຫລື ໄດ້ຖືກປົດສິດໃນການເປັນພໍ່ແມ່ ຫລື ເຈັບເປັນ ຫລື ຍ້ອນສາເຫດອື່ນ.

ຜູ້ປົກຄອງດັ່ງກ່າວຍັງມີໜ້າທີ່ປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ຫລື ຂອງຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຕື່ມອີກ.

### ມາດຕາ 44. ລະບຽບການແຕ່ງຕັ້ງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ

ພາຍຫລັງທີ່ໄດ້ຮັບໃບແຈ້ງການກ່ຽວກັບບຸກຄົນທີ່ຂາດການເບິ່ງແຍງແລ້ວ ນາຍບ້ານຕ້ອງແຕ່ງຕັ້ງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດຢ່າງຊ້າພາຍໃນ ໜຶ່ງເດືອນໂດຍໃຫ້ເລືອກເອົາຈາກຍາດພີ່ນ້ອງທີ່ໃກ້ຊິດ. ຍາດໃກ້ຊິດ ຫລື ບຸກຄົນດັ່ງກ່າວ ຫາກບໍ່ຮັບເປັນຜູ້ປົກຄອງແລ້ວ ຈຶ່ງໃຫ້ເລືອກເອົາບຸກຄົນອື່ນເປັນຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ.

ນາຍບ້ານ ທີ່ແຕ່ງຕັ້ງຜູ້ປົກຄອງດັ່ງກ່າວ ມີໜ້າທີ່ປະຕິບັດການກວດກາການເຄື່ອນໄຫວ ຂອງຜູ້ປົກຄອງນັ້ນຢ່າງເປັນປະຈຳ.

ຫ້າມແຕ່ງຕັ້ງຜູ້ທີ່ຍັງບໍ່ທັນເຖິງກະສຽນອາຍຸ,ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ, ຜູ້ທີ່ຖືກປົດສິດ ໃນການເປັນພໍ່ແມ່ ແລະ ຜູ້ທີ່ມີການປະພຶດບໍ່ເໝາະສົມ ມາເປັນຜູ້ປົກຄອງ.

### ມາດຕາ45. ສິດ ແລະ ພັນທະ ຂອງຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ

ຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດ ທາງດ້ານການປະພຶດ ມີສິດເປັນຜູ້ຕາງໜ້າຂອງບຸກຄົນດັ່ງກ່າວ ໃນການເຮັດສັນຍາ ແລະ ໃນການເຄື່ອນໄຫວອື່ນໆ

ຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ມີພັນທະລ້ຽງດູ, ສຶກສາອົບຮົມ, ເອົາໃຈໃສ່ຕໍ່ສຸຂະພາບ, ການຮ່ຳຮຽນ ແລະ ປົກປ້ອງສິດ ແລະ ຜົນປະໂຫຽດຂອງບຸກຄົນດັ່ງກ່າວ.

**ມາດຕາ 46. ການສິ້ນສຸດ ການເປັນຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ**

ການເປັນຜູ້ປົກຄອງເດັກ ຫລື ຜູ້ທີ່ບໍ່ມີຄວາມສາມາດທາງດ້ານການປະພຶດ ຈະສິ້ນສຸດລົງໃນເມື່ອບຸກຄົນນັ້ນຫາກເຖິງກະສຽນອາຍຸ ຫລື ເປັນຜູ້ທີ່ມີຄວາມສາມາດທາງດ້ານການປະພຶດແລ້ວ. ນອກຈາກນີ້ ຖ້າວ່າຜູ້ປົກຄອງນັ້ນຫາກບໍ່ມີຄວາມສາມາດໃນການປະຕິບັດໜ້າທີ່ຂອງຕົນໄດ້ ຫລື ປະຕິບັດພັນທະຂອງຕົນບໍ່ໄດ້ຢ່າງເໝາະສົມແລ້ວ ອາດຈະລົບລ້າງ ຫລື ປ່ຽນຜູ້ປົກຄອງນັ້ນກໍໄດ້.

ພາກທີ IV ການນໍາໃຊ້ກົດໝາຍຄອບຄົວລາວ ຕໍ່ຄົນຕ່າງປະເທດ,
ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ຕໍ່ພົນລະເມືອງລາວຢູ່ຕ່າງປະເທດ.

## ໝວດທີ 1 ການແຕ່ງດອງ ແລະ ການຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ມາດຕາ 47. ການແຕ່ງດອງ ລະຫວ່າງພົນລະເມືອງລາວ ກັບ ຄົນຕ່າງປະເທດ,ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.**

ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ມີສິດ ແລະ ພັນທະ ຄືກັນກັບພົນລະເມືອງລາວ ກ່ຽວກັບສາຍພົວພັນແຕ່ງດອງ ແລະ ຄອບຄົວ.

ການແຕ່ງດອງລະຫວ່າງພົນລະເມືອງລາວກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ປະຕິບັດຕາມຂໍ້ກໍານົດຂອງກົດໝາຍຄອບຄົວລາວສະບັບນີ້ ເຖິງວ່າກົດໝາຍຂອງປະເທດທີ່ຜູ້ຂໍແຕ່ງດອງນັ້ນ ຈະອະນຸຍາດໃຫ້ແຕ່ງດອງກັບຜູ້ທີ່ຍັງບໍ່ທັນເຖິງກະສຽນອາຍຸ ຫລື ໃຫ້ມີເມັຍຫລາຍຄົນກໍຕາມ.

ການຈົດທະບຽນແຕ່ງດອງລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວອາດຈະເຮັດຂຶ້ນຢູ່ສະຖານທູດ ຫລື ກົງສູນຂອງປະເທດທີ່ກ່ຽວຂ້ອງກໍໄດ້.

ການຈົດທະບຽນແຕ່ງດອງ ລະຫວ່າງຄົນບໍ່ມີສັນຊາດດ້ວຍກັນໃຫ້ປະຕິບັດຕາມ ກົດໝາຍຄອບຄົວລາວສະບັບນີ້. ສໍາລັບພົນລະເມືອງລາວທີ່ແຕ່ງດອງ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດນັ້ນ ຕ້ອງໄປຈົດທະບຽນຢູ່ນໍາເຈົ້າໜ້າທີ່ທະບຽນຄອບຄົວລາວ.

ລະບຽບການແຕ່ງດອງລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແມ່ນ ໃຫ້ ລັດຖະບານເປັນຜູ້ກໍານົດ.

**ມາດຕາ 48. ການຢ່າຮ້າງລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນ ຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.**

ການຢ່າຮ້າງ ລະຫວ່າງ ພົນລະເມືອງລາວ ກັບ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດ ແລະ ລະຫວ່າງ ຄົນຕ່າງປະເທດ, ຄົນຕ່າງດ້າວ, ຄົນບໍ່ມີສັນຊາດດ້ວຍກັນຢູ່ສາທາລະນະລັດປະຊາທິປະໄຕ ປະຊາຊົນລາວ ໃຫ້ປະຕິບັດຕາມຂໍ້ກໍານົດ ຂອງກົດໝາຍຄອບຄົວສະບັບນີ້.

ການຢ່າຮ້າງ ລະຫວ່າງພົນລະເມືອງລາວ ກັບຄົນຕ່າງປະເທດ ຢູ່ນອກດິນແດນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ປະຕິບັດຕາມກົດໝາຍຂອງປະເທດນັ້ນ.

## ໝວດທີ 2 ການແຕ່ງດອງ ແລະ ການຢ່າຮ້າງລະຫວ່າງ ພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ

**ມາດຕາ 49. ການແຕ່ງດອງລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ**

ການແຕ່ງດອງລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດຕ້ອງໃຫ້ສະຖານທູດ ຫລືກົງສູນລາວຮັບຮູ້ນໍາ.

ລະບຽບການແຕ່ງດອງລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດນັ້ນໃຫ້ປະຕິບັດຕາມກົດໝາຍຄອບຄົວລາວ.

ລັດຮັບຮູ້ການແຕ່ງດອງ ລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ ທີ່ເຮັດຂຶ້ນໂດຍສອດຄ່ອງກັບເນື້ອໃນຂອງກົດໝາຍຄອບຄົວສະບັບນີ້.

**ມາດຕາ 50. ການຢ່າຮ້າງ ລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດ**

ການຢ່າຮ້າງ ລະຫວ່າງພົນລະເມືອງລາວດ້ວຍກັນຢູ່ຕ່າງປະເທດໃຫ້ປະຕິບັດຕາມກົດໝາຍຂອງປະເທດນັ້ນ ຖ້າວ່າຄູ່ຜົວເມັຍ ຫາກຢູ່ປະເທດນັ້ນ.

ໃນເມື່ອຜົວ ຫລື ເມັຍຫາກຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວແລ້ວ ກໍໃຫ້ປະຕິບັດຕາມກົດໝາຍຄອບຄົວສະບັບນີ້.

## ໝວດທີ 3 ການເອົາເດັກທີ່ເປັນພົນລະເມືອງລາວມາເປັນລູກລ້ຽງ

**ມາດຕາ 51. ການເອົາເດັກທີ່ເປັນພົນລະເມືອງລາວມາເປັນລູກລ້ຽງ**

ຄົນລາວຢູ່ຕ່າງປະເທດ ຈະເອົາເດັກທີ່ເປັນພົນລະເມືອງລາວ ຊຶ່ງຢູ່ຕ່າງປະເທດ ມາເປັນລູກລ້ຽງນັ້ນ ໃຫ້ເຮັດຢູ່ສະຖານທູດ ຫລື ກົງສູນລາວ ໂດຍປະຕິບັດຕາມກົດໝາຍຄອບຄົວລາວ. ຖ້າວ່າພໍ່ລ້ຽງແມ່ລ້ຽງ ຫາກບໍ່ແມ່ນພົນລະເມືອງລາວແລ້ວ ການເອົາເດັກມາເປັນລູກລ້ຽງນັ້ນຕ້ອງໄດ້ຮັບອະນຸຍາດຈາກອົງການທີ່ມີສິດອໍານາດກ່ຽວຂ້ອງຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວເສຍກ່ອນ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ຫລື ຄົນບໍ່ມີສັນຊາດ ຈະເອົາເດັກທີ່ເປັນພົນລະເມືອງລາວ ຊຶ່ງຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ພົນລະເມືອງລາວ ຈະເອົາເດັກທີ່ເປັນ ຄົນຕ່າງປະເທດ ຫລື ຄົນຕ່າງດ້າວ ຊຶ່ງຢູ່ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ມາເປັນລູກລ້ຽງ ແມ່ນ ໃຫ້ປະຕິບັດຕາມຂໍ້ກຳນົດຂອງກົດຫມາຍຄອບຄົວລາວ.

ກົດຫມາຍສະບັບນີ້ ໄດ້ລົງຄະແນນສຽງຮັບຮອງເອົາ ຢ່າງເປັນເອກະສັນ ໃນກອງປະຊຸມສະໄໝສາມັນຄົບຄະນະ ເທື່ອທີ ຫ້າ ຂອງສະພາປະຊາຊົນສູງສຸດ (ຊຸດທີ II) ໃນວັນທີ 29/11/90 ເວລາ 15 ໂມງ 00.

ປະທານສະພາປະຊາຊົນສູງສຸດ

ໜູຮັກ ພູມສະຫວັນ